3321

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ນາຍົກລັດຖະມົນຕີ

ເລກທີ...12.../ນຍ
ນະຄອນຫຼວງວຽງຈັນ, ວັນທີ..23..08..2018

ເລກທີ 1964
ວັນທີ 24/8/18

# ຄຳສັ່ງ
## ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດ

ເຖິງ: ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມ ການຕົກລົງ ແລະ ທິດຊີ້ນຳຂອງກອງປະຊຸມ ລັດຖະບານ ປະຈຳເດືອນມິຖຸນາ 2018.

ເພື່ອເຮັດໃຫ້ 8 ມາດຕະການ ໃນການຊຸກຍູ້ເສດຖະກິດ ໄດ້ຮັບການຜັນຂະຫຍາຍ ເຂົ້າສູ່ວຽກງານຕົວຈິງຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ທັງເປັນການຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ໃນ 6 ເດືອນທ້າຍປີ 2018 ແລະ ສືບຕໍ່ຈັດຕັ້ງປະຕິບັດໃນປີ 2019 ໃຫ້ມີປະສິດທິຜົນ, ສາມາດຂັບເຄື່ອນເສດຖະກິດໃຫ້ມີຄວາມຄ່ອງຕົວ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

I. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ແລະ ສຸມໃສ່ປະຕິບັດບັນດາມາດຕະການຊຸກຍູ້ເສດຖະກິດ ທີ່ຕິດພັນກັບພາລະບົດບາດ, ໜ້າທີ່ຄວາມຮັບຜິດຊອບ ແລະ ຂອບເຂດສິດ ຂອງຕົນ ດັ່ງນີ້:

1. ມາດຕະການທີ 1: ການສະກັດກັ້ນໄພເງິນເຟີ້ ແລະ ປັບປຸງນະໂຍບາຍເງິນຕາ

ກ. ມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການປະສານ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ບັນດາໜ້າວຽກ ດັ່ງນີ້:

1) ຄວບຄຸມປະລິມານເງິນອອກສູ່ຂອດຈໍລະຈອນ M2 ໃຫ້ເພີ່ມຂຶ້ນຢູ່ໃນກອບ ທີ່ສະພາແຫ່ງຊາດໄດ້ຮັບຮອງ;
2) ນຳໃຊ້ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຢ່າງຮັດກຸມຂອງລັດ; ຕິດຕາມກວດກາການເຄື່ອນໄຫວທຸລະກິດ ຂອງຮ້ານແລກປ່ຽນເງິນຕາ ຢ່າງເຂັ້ມງວດ ເພື່ອຈຳກັດຊ່ອງຫວ່າງ ແລະ ປະກົດການຫຍໍ້ທໍ້ຕ່າງໆ. ພ້ອມທັງຄວບຄຸມສ່ວນຕ່າງອັດຕາແລກປ່ຽນລະຫວ່າງທະນາຄານ ແລະ ຕະຫຼາດ ບໍ່ໃຫ້ເກີນ 2%;
3) ເອົາໃຈໃສ່ຄຸ້ມຄອງເງິນຕາຕ່າງປະເທດ, ເພີ່ມຄັງສຳຮອງເງິນຕາຕ່າງປະເທດ ໂດຍການອຳນວຍຄວາມສະດວກ, ຊຸກຍູ້ ແລະ ຊ່ວຍເຫຼືອ ໃຫ້ມີການ ຜະລິດສິນຄ້າເພື່ອສົ່ງອອກ ແລະ ສົ່ງເສີມການຊຳລະສະສາງຜ່ານລະບົບ ທະນາຄານ ໃຫ້ຫຼາຍຂຶ້ນ;

4) ກຳນົດສ່ວນຕ່າງຂອງອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ໃຫ້ແທດເໝາະກັບສະພາບຕົວຈິງ ຂອງຕະຫຼາດ;
5) ເອົາໃຈໃສ່ພັດທະນາຕະຫຼາດທຶນ ແລະ ຊຸກຍູ້ຕະຫຼາດຫຼັກຊັບລາວ ໃຫ້ຂະຫຍາຍຕົວ ເພື່ອລະດົມທຶນ ແລະ ມີການເຄື່ອນໄຫວທຸລະກຳຫຼາຍຂຶ້ນ;
6) ເລັ່ງລັດ, ກວດກາ ແລະ ປັບປຸງທະນາຄານທຸລະກິດລັດໃຫ້ໄດ້ຄົບຕາມເງື່ອນໄຂ ແລະ ມາດຖານ ກ່ອນການຊອກຫາຄູ່ຮ່ວມທຶນ ໃນການດຳເນີນກິດຈະການ.

ຂ. ມອບໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ກຳນົດໂຄງປະກອບ, ກວດກາ, ດັດປັບ ແລະ ຄຸ້ມຄອງລາຄານ້ຳມັນ, ສິນຄ້າອຸປະໂພກ-ບໍລິໂພກ ທີ່ເປັນພື້ນຖານ ແລະ ມີຜົນກະທົບໄວຕໍ່ການດຳລົງຊີວິດຂອງປະຊາຊົນ ໃຫ້ເໝາະສົມ ແລະ ສອດຄ່ອງກັບສະພາບຕົວຈິງ;
2) ສົ່ງເສີມການຜະລິດ ແລະ ນຳໃຊ້ພະລັງງານທົດແທນ ແລະ ພະລັງງານທາງເລືອກ, ສິນຄ້າອຸປະໂພກ-ບໍລິໂພກ ທີ່ປະເທດເຮົາມີທ່າແຮງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ການຜະລິດພາຍໃນ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າ ຈາກຕ່າງປະເທດ;
3) ດັດສົມຈຳນວນບໍລິສັດນຳເຂົ້ານ້ຳມັນ ແລະ ບໍລິການນ້ຳມັນເຊື້ອໄຟໃຫ້ມີມາດຕະຖານ ຕາມດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ແລະ ແຈ້ງການສະບັບເລກທີ 140/ຫສນຍ.ກລຂ, ລົງວັນທີ 25 ມັງກອນ 2017 ເພື່ອໃຫ້ຈຳນວນບໍລິສັດທຸລະກິດນຳເຂົ້າຫຼຸດລົງບໍ່ໃຫ້ເກີນ 5 ຫຼື 6 ບໍລິສັດ;
4) ກວດກາ ແລະ ດັດສົມຈຳນວນບໍລິສັດ ແລະ ຮ້ານຕົວແທນຈຳໜ່າຍພາຫະນະ ທີ່ບໍ່ໄດ້ມາດຕະຖານ ເພື່ອຊຸກຍູ້ ແລະ ສົ່ງເສີມການນຳເຂົ້າ ແລະ ການບໍລິການຫຼັງການຂາຍ ທີ່ມີຄຸນນະພາບ, ຮັບປະກັນທາງດ້ານເຕັກນິກ ແລະ ຄຸ້ມຄອງຕາມກົດໝາຍ ແລະ ລະບຽບການ ໄດ້ຢ່າງຮັດກຸມ;
5) ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ການຜະລິດສິນຄ້າ ນັບມື້ນັບຫຼາຍຂຶ້ນ.

2. **ມາດຕະການທີ 2: ການປັບປຸງສະພາບແວດລ້ອມ ແລະ ອຳນວຍຄວາມສະດວກໃນການດຳເນີນທຸລະກິດ**

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ເປັນເຈົ້າການ ສົມທົບ ກັບກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ສືບຕໍ່ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ຄຳສັ່ງເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018 ຢ່າງເຂັ້ມງວດ; ເອົາໃຈໃສ່ປັບປຸງ ກົນໄກປະສານງານໃຫ້ຄ່ອງຕົວ ແລະ ມີປະສິດທິຜົນກວ່າເກົ່າ; ປັບປຸງຂັ້ນຕອນການອະນຸມັດການລົງທຶນ, ການນຳເຂົ້າ, ການສົ່ງອອກ ແລະ ການເຄື່ອນໄຫວທຸລະກິດ ຕ່າງໆ ໃຫ້ຖືກກົດໝາຍ ແລະ ລະບຽບການ, ໂປ່ງໃສ, ວ່ອງໄວ ແລະ ມີປະສິດທິຜົນສູງຂຶ້ນ;
2) ຮີບຮ້ອນແກ້ໄຂບັນຫາທີ່ເປັນຂອດຄົງຄ້າງ, ອຸດຕັນ ຫຼື ຖ່ວງດຶງໂຄງການລົງທຶນ ຂອງພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການອະນຸມັດໄປແລ້ວ ໃຫ້ສາມາດເຄື່ອນໄຫວໄດ້ສະດວກ ແລະ ມີໝາກນີຜົນ;
3) ສືບຕໍ່ຕິດຕາມ, ກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນ ການຈັດຕັ້ງປະຕິບັດກົນໄກປະຕູດຽວ, ພ້ອມທັງສະຫຼຸບລາຍງານລັດຖະບານເປັນແຕ່ລະໄລຍະ ເພື່ອຊາບ ແລະ ຊີ້ນຳການປັບປຸງ-ປ່ຽນແປງ ໃຫ້ດີຂຶ້ນໄປເລື້ອຍໆ;
4) ຮີບຮ້ອນແກ້ໄຂບັນຫາ ທີ່ພົວພັນກັບການສະໜອງທີ່ເປັນປົກກະຕິ ແລະ ຕົ້ນທຶນທີ່ເໝາະສົມຂອງການດຳເນີນທຸລະກິດ ເປັນຕົ້ນແມ່ນການສະໜອງ ແລະ ບໍລິການໄຟຟ້າ, ນ້ຳປະປາ, ເກັບມ້ຽນສິ່ງເສດເຫຼືອ, ຂົນສົ່ງ ແລະ ອື່ນໆ;

5) ຊຸກຍູ້ການລົງທຶນທົ່ວໄປ ແລະ ການລົງທຶນໃນເຂດເສດຖະກິດພິເສດ ທີ່ລັດຖະບານໄດ້ອະນຸມັດ ໃຫ້ປະຕິບັດ ຕາມສັນຍາ ແລະ ຕາມແຜນໂຄງການ;

6) ສ້າງເງື່ອນໄຂ ແລະ ສະພາບແວດລ້ອມ ໃຫ້ແກ່ການພັດທະນາອຸດສາຫະກຳທີ່ປະເທດເຮົາມີທ່າແຮງ ໂດຍສະເພາະອຸດສາຫະກຳປຸງແຕ່ງ, ພະລັງງານ, ບໍ່ແຮ່ ແລະ ອື່ນໆ.

3. ມາດຕະການທີ 3: ການສືບຕໍ່ແກ້ໄຂໜີ້ສິນພາຍໃນ.

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ສືບຕໍ່ແກ້ໄຂໜີ້ 3 ແຈ ທີ່ຍັງຄ້າງຄາໃຫ້ສຳເລັດໂດຍໄວ ເພື່ອຊ່ວຍໃຫ້ພາກທຸລະກິດມີຖານະການເງິນທີ່ດີຂຶ້ນສາມາດເຂົ້າເຖິງແຫຼ່ງທຶນ ແລະ ສາມາດເຄື່ອນໄຫວທຸລະກິດໄດ້ສະດວກກວ່າເກົ່າ;

2) ສືບຕໍ່ປະຕິບັດການຊຳລະໜີ້ ໂດຍໃຫ້ບູລິມະສິດແກ່ໂຄງການໃນແຜນ ທີ່ປະຕິບັດສຳເລັດ 100%, ແຕ່ຕ້ອງມີການກວດສອບກວດກາມູນຄ່າໂຄງການໃຫ້ຖືກຕ້ອງ ແລະ ສ້າງເປັນແຜນຊຳລະໜີ້ ໃຫ້ແທດກັບຕົວຈິງ;

3) ອອກມາດຕະການ ແລະ ກົນໄກທີ່ກ່ຽວຂ້ອງ ເພື່ອຊ່ວຍໃຫ້ວິສາຫະກິດ ທີ່ມີຄວາມຫຍຸ້ງຍາກທາງດ້ານການເງິນ ໃຫ້ມີທ່າແຮງ ແລະ ມີບົດບາດສຳຄັນໃນການຊຸກຍູ້ເສດຖະກິດ ໃຫ້ສາມາດເຂົ້າເຖິງແຫຼ່ງທຶນທີ່ມີອັດຕາດອກເບ້ຍເໝາະສົມ.

4. ມາດຕະການທີ 4: ການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ

ມອບໃຫ້ກະຊວງການເງິນ ສົມທົບກັບພາກສ່ວນກ່ຽວຂ້ອງ ປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ຈັດຕັ້ງປະຕິບັດຄຳສັ່ງເລກທີ 40/ນຍ, ລົງວັນທີ 29 ກັນຍາ 2016 ວ່າດ້ວຍ ການເກັບກຳ ແລະ ສຳຫຼວດຖານລາຍຮັບງົບປະມານຄືນໃໝ່ ໃນຂອບເຂດທົ່ວປະເທດ ຢ່າງເຂັ້ມງວດ ໂດຍປະສານສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່, ຂຶ້ນແຜນເກັບລາຍຮັບ ເປັນຕົ້ນແມ່ນ ພັນທະຄ່າພາກຫຼວງ, ຄ່າຊົບພະຍາກອນທຳມະຊາດ ແລະ ອາກອນຕ່າງໆ ຈາກທຸລະກິດພະລັງງານ ແລະ ບໍ່ແຮ່ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ;

2) ມອບໃຫ້ບັນດາຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນ ກວດກາ-ສັງລວມປະເພດລາຍຮັບວິຊາການ, ຄາດຄະເນແຜນລາຍຮັບ-ລາຍຈ່າຍ ແລະ ຄຸ້ມຄອງການເກັບລາຍຮັບດັ່ງກ່າວ ໃຫ້ຮັດກຸມ;

3) ກວດຄືນຖານລາຍຮັບຕົ້ນຕໍ ທີ່ມີແລ້ວໃຫ້ຄົບຖ້ວນ ແລະ ເລັ່ງທວງບັນດາຫົວໜ່ວຍທຸລະກິດ ທີ່ມີໜີ້ຄ້າງມອບ ໃຫ້ປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການຢ່າງເຄັ່ງຄັດ;

4) ແກ້ໄຂໄວ ນະໂຍບາຍຍົກເວັ້ນອາກອນມູນຄ່າເພີ່ມ ສຳລັບທຸລະກິດທີ່ບໍ່ຄວນຍົກເວັ້ນ ເປັນຕົ້ນແມ່ນໂຄງການດ້ານການຂຸດຄົ້ນ ແລະ ສົ່ງອອກແຮ່ທາດ, ພະລັງງານໄຟຟ້າ, ກໍ່ສ້າງ ແລະ ໂຄງການລົງທຶນຂະໜາດໃຫຍ່ອື່ນໆ ລວມທັງໂຄງການທີ່ຍັງໄດ້ຮັບການຍົກເວັ້ນພາຍຫຼັງສິ້ນສຸດການກໍ່ສ້າງ;

5) ດຳເນີນການເກັບຄ່າທຳນຽມທາງ ໂດຍຜ່ານລະບົບທະນາຄານ ແລະ ຜ່ານມືຖື ໃຫ້ທົ່ວເຖິງຄົບຖ້ວນກວ່າເກົ່າ, ພ້ອມນັ້ນ ກໍ່ໃຫ້ຂະຫຍາຍໄປສູ່ການເກັບອາກອນປະເພດອື່ນໆ ເປັນຕົ້ນແມ່ນອາກອນພາສີທີ່ດິນ, ອາກອນລາຍໄດ້, ອາກອນຄ່າເຊົ່າ ແລະ ອາກອນມອບເໝົາ ໃຫ້ສາມາດຈັດຕັ້ງປະຕິບັດໄດ້ໄວ;

6) ຕິດຕັ້ງອຸປະກອນເຄື່ອງມືທີ່ທັນສະໄໝໃນການເກັບພາສີ-ອາກອນ ທີ່ຂັ້ນສູນກາງຮັບຜິດຊອບ ແລະ ບັນດາແຂວງຕ່າງໆ ຮັບຜິດຊອບ ໃນທົ່ວປະເທດ ລວມທັງດ່ານສາກົນ ແລະ ທ້ອງຖິ່ນ ພ້ອມທັງຍົກລະດັບຄວາມສາມາດຂອງພະນັກງານໃນການຄຸ້ມຄອງ ແລະ ເກັບລາຍຮັບ ຢ່າງເປັນລະບົບ ຮັດກຸມ ແລະ ສາມາດກວດສອບໄດ້;

7) ຄຸ້ມຄອງການນຳເຂົ້ານ້ຳມັນເຊື້ອໄຟ ໂດຍການປັບປຸງລະບົບຕິດຕາມຕົວຈິງ ຕາມແຜນການນຳເຂົ້າຂອງບັນດາວິສາຫະກິດໃຫ້ຖືກຕ້ອງຊັດເຈນ ໂດຍປະສານສົມທົບກັບອົງການພາສີຂອງປະເທດຕົ້ນທາງ,

ເພື່ອເກັບກໍາຈໍານວນບໍລິສັດທີ່ສະໜອງນໍ້າມັນເຊື້ອໄຟ ທີ່ສະໜອງໃຫ້ແກ່ບໍລິສັດນໍາເຂົ້າ ບໍ່ໃຫ້ມີການລົບຫຼີກພາສີ-ອາກອນ ຢູ່ຂອດນໍາເຂົ້າໄດ້;

8) ສືບຕໍ່ແກ້ໄຂການນໍາເຂົ້າລົດ ທີ່ບໍ່ຖືກຕ້ອງໃຫ້ສໍາເລັດ ຂາດໂຕ, ຊອກຮູ້ສາຍເຫດຕົວຈິງຂອງການຄ້າຂາຍລົດເຖື່ອນ, ວາງມາດຕະການສະກັດກັ້ນ ແລະ ດໍາເນີນຄະດີຕໍ່ຜູ້ກະທໍາຜິດ ຕາມກົດບຽບກົດໝາຍຢ່າງເຂັ້ມງວດ;
9) ສົມທົບກັບກະຊວງພະລັງງານ ແລະ ບໍ່ແຮ່ ແລະ ບໍລິສັດໄຟຟ້າລາວ ກວດຄືນບັນດາສັນຍາກັບບໍລິສັດຮັບເໝົາ ໃນການກໍ່ສ້າງເຄືອຂ່າຍສາຍສົ່ງ ທີ່ນໍາໃຊ້ເງິນກູ້ຢືມ ເພື່ອປັບປຸງອັດຕາການເກັບພາສີ-ອາກອນຕ່າງໆທີ່ຍົກເວັ້ນ ໃຫ້ຖືກຕ້ອງຕາມກົດໝາຍ;
10) ປັບປຸງກົນໄກ ແລະ ລະບຽບການຕ່າງໆ ກ່ຽວກັບການຄຸ້ມຄອງລາຍຮັບດ້ານວິຊາການ ແລະ ການຄຸ້ມຄອງກອງທຶນ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ, ລວມສູນ, ຄ່ອງຕົວ ແລະ ໂປ່ງໃສ;
11) ຄົ້ນຄວ້າມາດຕະການຫຼຸດລາຍຈ່າຍ ທີ່ບໍ່ຈໍາເປັນຂອງຂະແໜງການ ແລະ ທ້ອງຖິ່ນ ໃຫ້ເໝາະສົມ ເພື່ອຕອບສະໜອງກັບສະພາບການເກັບລາຍຮັບທີ່ມີທ່າອ່ຽງວ່າ ຈະບໍ່ບັນລຸໄດ້ຕາມແຜນການ;
12) ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຄໍາສັ່ງ ສະບັບເລກທີ 09/ນຍ ວ່າດ້ວຍການປະຢັດລາຍຈ່າຍງົບປະມານລັດ ໃຫ້ເປັນຮູບປະທໍາ ແລະ ໄດ້ຮັບຜົນດີ;
13) ກວດສອບກວດກາລາຍຈ່າຍທີ່ມີລັກສະນະຊໍ້າຊ້ອນ ແລະ ບໍ່ຖືກເປົ້າໝາຍ, ທັງບໍ່ມີປະສິດທິຜົນ, ກວດກາຫຼັງການຈ່າຍງົບປະມານ ໃນແຕ່ລະໄລຍະຢ່າງເຂັ້ມງວດ ແລະ ປົກກະຕິ ເພື່ອຈໍາກັດການລະເມີດວິໄນການເງິນ ໃນການຈ່າຍເກີນແຜນ ຫຼື ຈ່າຍບໍ່ຖືກເປົ້າໝາຍ ຫຼື ຈ່າຍນອກແຜນ ຫຼື ຈ່າຍອື່ນໆ ທີ່ບໍ່ສອດຄ່ອງກັບກົດໝາຍ;
14) ສືບຕໍ່ແກ້ໄຂການເບີກຈ່າຍເງິນເດືອນ, ເງິນບໍານານ, ເງິນນະໂຍບາຍ ແລະ ເບີກຈ່າຍອື່ນໆ ໃຫ້ທັນເວລາພ້ອມທັງຂະຫຍາຍການເບີກຈ່າຍຜ່ານລະບົບທະນາຄານ (ATM) ໃຫ້ກວ້າງຂວາງເຖິງເຂດຫ່າງໄກສອກຫຼີກກວ່າເກົ່າ; ພ້ອມທັງໃຫ້ກວດກາຈໍານວນພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດທີ່ປະຕິບັດວຽກງານຕົວຈິງ ຢູ່ໃນກົງຈັກແຕ່ລະຂັ້ນ ເພື່ອການເບີກຈ່າຍເງິນເດືອນຖືກຕ້ອງຕາມຕົວຈິງ;
15) ບໍ່ອະນຸຍາດໃຫ້ມີການຈ່າຍລ່ວງໜ້ານອກແຜນງົບປະມານ ໃນລະບົບຄັງເງິນແຫ່ງຊາດ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆຢ່າງເດັດຂາດ;
16) ດໍາເນີນການກວດກາ ບັນດາໂຄງການລົງທຶນຂອງລັດ ທີ່ມີການໄລ່ລຽງ ຫຼື ສ້າງແຜນງົບປະມານສູງເກີນຄວາມຈໍາເປັນ ເພື່ອເຈລະຈາຫຼຸດຜ່ອນລາຍຈ່າຍທີ່ເຫັນວ່າ ບໍ່ເໝາະສົມກັບຜູ້ພັດທະນາໂຄງການ;
17) ເປັນເຈົ້າການສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າມີຄໍາເຫັນຕໍ່ແຜນການລົງທຶນໃໝ່ ຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ມີລາຍຮັບງົບປະມານໃນການຊໍາລະສະສາງ ໃຫ້ແກ່ໂຄງການທີ່ສໍາເລັດ. ຖ້າບໍ່ມີແຫຼ່ງທຶນໃນການຊໍາລະໃຫ້ສະເໜີເລື່ອນບັນດາໂຄງການນັ້ນອອກໄປ.

5. **ມາດຕະການທີ 5: ການພັດທະນາ SMEs ແລະ ການສົ່ງເສີມການຜະລິດ.**

ມອບໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນໃຈກາງປະສານສົມທົບກັບກະຊວງການເງິນ, ກະຊວງກະສິກໍາ ແລະ ປ່າໄມ້, ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ສືບຕໍ່ປັບປຸງດໍາລັດ ວ່າດ້ວຍກອງທຶນສົ່ງເສີມ SMEs ເພື່ອຍົກລະດັບນະໂຍບາຍ, ກົນໄກ ແລະ ເຄື່ອງມືໃນການພັດທະນາ SMEs ໃຫ້ມີປະສິດທິຜົນກວ່າເກົ່າ; ຈັດຕັ້ງ SMEs ແລະ ຄົ້ນຄວ້ານະໂຍບາຍເພື່ອໃຫ້ບຸລິມະສິດແກ່ກຸ່ມ SMEs ທີ່ມີທ່າແຮງ ເພື່ອກະຕຸ້ນເສດຖະກິດ ແລະ ສ້າງລາຍຮັບເຂົ້າປະເທດ;

2) ຂະຫຍາຍກອງທຶນ SMEs ແລະ ຊຸກຍູ້ໃຫ້ທະນາຄານລັດ ແລະ ທະນາຄານທຸລະກິດລະດົມທຶນ ເພື່ອສະໜອງສິນເຊື່ອໃຫ້ແກ່ SMEs ທີ່ມີຄວາມອາດສາມາດສູງ ໃນການຜະລິດເປັນສິນຄ້າ ແລະ ດຳເນີນທຸລະກິດ ທີ່ມີປະສິດຜົນ; ພ້ອມທັງໃຫ້ສະໜອງສິນເຊື່ອທີ່ຈຳເປັນ ໂດຍສະເພາະຈາກທະນາຄານນະໂຍບາຍ ແລະ ທະນາຄານສົ່ງເສີມກະສິກຳ ໃຫ້ແກ່ຄອບຄົວຊາວກະສິກອນ ຫຼື ຜູ້ປະກອບການທີ່ມີຄຸນນະພາບ, ມີຄວາມອາດສາມາດໃນການສ້າງຜົນກຳໄລ ແລະ ບໍ່ສ້າງໜີ້ເສຍ ໂດຍພິຈາລະນາອັດຕາດອກເບ້ຍທີ່ເໝາະສົມ ຕາມສະພາບເສດຖະກິດ ແລະ ລະດູການຜະລິດ;
3) ຊຸກຍູ້ການຮຽນຮູ້, ນຳໃຊ້ຄວາມຮູ້ເຕັກນິກ, ເຕັກໂນໂລຊີທີ່ທັນສະໄໝ ແລະ ນະວັດຕະກຳ ເຂົ້າໃນການຜະລິດ ເພື່ອຍົກສູງຄວາມອາດສາມາດແຂ່ງຂັນທຸລະກິດພາຍໃນ;
4) ແກ້ໄຂບັນດາຂໍ້ຫຍຸ້ງຍາກ ແລະ ສິ່ງກີດຂວາງຕ່າງໆ ທີ່ເປັນຕົ້ນທຶນຂອງການຜະລິດ ແລະ ການບໍລິການ ແລະ ຮີບຮ້ອນແກ້ໄຂ ໃຫ້ມີຄວາມຄືບໜ້າໄວ;
5) ຈັດຕັ້ງວິຊາການທີ່ມີຄວາມຮູ້ ແລະ ປະສົບການໄປຊ່ວຍແນະນຳທາງດ້ານເຕັກນິກ ເພື່ອຍົກລະດັບຄວາມອາດສາມາດທາງດ້ານເຕັກນິກຂອງຜູ້ປະກອບການ ແລະ ຜູ້ທຳການຜະລິດ;
6) ສະໜອງແນວພັນ, ຝຸ່ນ, ວັດຖຸຈຳເປັນ ແລະ ອື່ນໆໃຫ້ພຽງພໍຕາມຄວາມຕ້ອງການ ໂດຍສະເພາະໃນເຂດຈຸດສຸມສົ່ງອອກເຂົ້າ, ພືດ ແລະ ສັດຕ່າງໆ ຢ່າງມີແຜນການ ແລະ ຈຸດສຸມລະອຽດ (ກຳນົດເປັນແຜນໄລຍະສັ້ນ, ກາງ ແລະ ຍາວ);
7) ສືບຕໍ່ສ້ອມແປງລະບົບຊົນລະປະທານບ່ອນທີ່ເປ່ເພ ໃຫ້ສາມາດນຳໃຊ້ ເພື່ອສະໜອງນ້ຳໃຫ້ພຽງພໍຕໍ່ການຜະລິດທັງສອງລະດູ; ພ້ອມທັງກະກຽມຄວາມພ້ອມ ເພື່ອການຕ້ານແລ້ງຕ້ານຖ້ວມ;
8) ກະກຽມ ແລະ ປ້ອງກັນການລະບາດຂອງສັດຕູພືດ ແລະ ສັດ, ພ້ອມທັງຄົ້ນຄວ້າທິດທາງ ແລະ ມາດຕະການໄລຍະຍາວ ໃນການຮັບມືກັບບັນຫາການລະບາດດັ່ງກ່າວ;
9) ກວດກາ, ເຈລະຈາ ແລະ ຫາວິທີແກ້ໄຂບັນດາມາດຕະການກີດກັ້ນຕ່າງໆ ຂອງການຄ້າຂາຍຊາຍແດນຕໍ່ການສົ່ງອອກສິນຄ້າກະສິກຳຂອງລາວ ກັບປະເທດເພື່ອນບ້ານ ເຊັ່ນ: ການສົ່ງອອກໝາກສາລີ, ກາເຟ, ມັນຕົ້ນ, ພືດຜັກ, ໝາກໄມ້ ແລະ ອື່ນໆ;
10) ສ້າງຄຳແນະນຳ ກ່ຽວກັບນະໂຍບາຍດ້ານພາສີ, ອາກອນມູນຄ່າເພີ່ມ ແລະ ນະໂຍບາຍປົ່ນອ້ອມອື່ນໆ ໃຫ້ລະອຽດ, ຈະແຈ້ງ ແລະ ມີຜົນບັງຄັບໃຊ້ໄວ;
11) ກວດກາ ແລະ ດັດປັບຄືນບັນດາຕົ້ນທຶນ ທີ່ຕິດພັນກັບການຜະລິດ ເຊັ່ນ: ຄ່າໄຟຟ້າ, ຄ່າຂົນສົ່ງ ແລະ ຄ່າທຳນຽມອື່ນໆ ທີ່ຊາວກະສິກອນ ແລະ ຜູ້ປະກອບການ ຍັງແບກຫາບພາລະຫຼາຍ ເພື່ອຄົ້ນຄ້ວາວິທີການ ແລະ ມາດຕະການແກ້ໄຂ ໃຫ້ທັນສະພາບການ.

6. **ມາດຕະການທີ 6: ການປັບປຸງໂຄງສ້າງການລົງທຶນ.**

ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາໜ້າວຽກ ດັ່ງນີ້:

1) ກວດກາຄືນບັນດາໂຄງການລົງທຶນຂອງລັດ ທີ່ຍັງບໍ່ທັນໄດ້ປະຕິບັດ ແລະ ເຫັນວ່າມີປະສິດທິຜົນຕໍ່າ ເພື່ອຫັນທຶນໃສ່ໂຄງການລົງທຶນ ທີ່ມີຄວາມຈຳເປັນ ແລະ ມີປະສິດທິຜົນສູງກວ່າ (ໂດຍຜ່ານຂະບວນການສ້າງ ແລະ ປະເມີນໂຄງການກ່ອນເອົາເຂົ້າແຜນຕາມກົດໝາຍ ແລະ ລະບຽບການ);
2) ກວດກາມູນຄ່າໂຄງການລົງທຶນຂອງລັດ ທີ່ສູງເກີນຄວາມຈິງ ແລະ ຕັດມູນຄ່າໂຄງການລົງ ເພື່ອປະຢັດງົບປະມານ ແຕ່ສາມາດຮັບປະກັນປະສິດທິຜົນຂອງໂຄງການ;
3) ສົ່ງເສີມການລົງທຶນ ຂອງພາກສັງຄົມ ແລະ ທຸລະກິດເຂົ້າໃນການພັດທະນາໂຄງການກໍ່ສ້າງພື້ນຖານໂຄງລ່າງໃນຮູບແບບ BOT ຫຼື PPP ເພື່ອຫຼຸດຜ່ອນພາລະແບກຫາບຂອງລັດ ໃນການກູ້ຢືມ ຫຼື ຈັດສັນງົບປະມານການລົງທຶນ ໃນແຕ່ລະສົກງົບປະມານ;

4) ກຳນົດຂອບເຂດງົບປະມານ ໂຄງການລົງທຶນລັດ ທີ່ເປັນບູລິມະສິດ ໃຫ້ແກ່ໂຄງການລະດັບຊາດ, ລະດັບຂະແໜງການ ແລະ ທ້ອງຖິ່ນ ພ້ອມທັງຄົ້ນຄວ້າກົນໄກການຄັດເລືອກ ແລະ ຮັບຮອງເອົາໂຄງການລົງທຶນຂອງລັດຄືນໃໝ່ ເພື່ອຮັບປະກັນຄວາມໂປ່ງໃສ, ປະສິດທິຜົນທາງດ້ານເສດຖະກິດ ແລະ ແຫຼ່ງທຶນຊຳລະກ່ອນສະເໜີສະພາແຫ່ງຊາດ; ກວດກາຢ່າງເຄັ່ງຄັດ ການຈັດສັນທຶນເຂົ້າໃສ່ໂຄງການໃໝ່ ໃຫ້ສອດຄ່ອງກັບມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ. ທັງນີ້ເພື່ອຮັບປະກັນບໍ່ໃຫ້ສ້າງໜີ້ສິນໃໝ່ຕື່ມອີກ;

5) ອອກຂໍ້ກຳນົດ, ມາດຕະການ ການນຳໃຊ້ທຶນຊ່ວຍເຫຼືອ ເພື່ອການພັດທະນາ ເພື່ອຍົກປະສິດທິຜົນຂອງການນຳໃຊ້ທຶນ ຫຼື ຫັນຕົ້ນທຶນຊ່ວຍເຫຼືອດັ່ງກ່າວ ໄປກະຕຸ້ນເສດຖະກິດໂດຍກົງໃຫ້ຫຼາຍຂຶ້ນ.

7. ມາດຕະການທີ 7: ການຄຸ້ມຄອງທີ່ດິນ ແລະ ການເກັບລາຍຮັບຈາກທີ່ດິນ.

ມອບໃຫ້ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດບັດດາໜ້າວຽກ ດັ່ງນີ້:

1) ຮີບຮ້ອນຂຶ້ນບັນຊີ ແລະ ອອກໃບທະບຽນທີ່ດິນ, ປັບປຸງຂັ້ນຕອນ, ລະບຽບການ, ການປະສານງານກົນໄກການຄຸ້ມຄອງ ແລະ ເກັບລາຍຮັບທີ່ດິນໃຫ້ສັ້ນ, ກະທັດຮັດ, ໂປ່ງໃສ ສາມາດກວດສອບໄດ້;

2) ກວດກາ ແລະ ແກ້ໄຂການຫັນຊັບສິນເປັນທຶນ ໃນໄລຍະຜ່ານມາ ທີ່ບໍ່ຖືກຕ້ອງກັບກົດໝາຍ, ລະບຽບການ ແລະ ເຮັດໃຫ້ລັດເສຍຜົນປະໂຫຍດ ໃຫ້ສຳເລັດໂດຍໄວ;

3) ຫັນການຄຸ້ມຄອງທີ່ດິນ, ການເກັບລາຍຮັບຈາກທີ່ດິນ ໄປສູ່ລະບົບເອເລັກໂຕຼນິກທີ່ທັນສະໄໝ ສາມາດກວດສອບໄດ້ ໂດຍສືບຕໍ່ເຮັດທົດລອງຢູ່ນະຄອນຫຼວງວຽງຈັນ ໃນ 6 ເດືອນທ້າຍປີ 2018 ໃຫ້ສຳເລັດ ພ້ອມທັງສືບຕໍ່ຖອດຖອນບົດຮຽນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ໄປໃນທົ່ວປະເທດ;

4) ຈັດສັນ ແລະ ຄຸ້ມຄອງທີ່ດິນກະສິກຳໃຫ້ເປັນລະບົບ, ຊັດເຈນ ແລະ ເອື້ອອຳນວຍໃຫ້ແກ່ການຜະລິດ ພ້ອມທັງກວດກາ ແລະ ປະເມີນຄືນປະສິດທິຜົນຂອງການນຳໃຊ້ທີ່ດິນສຳປະທານ ເພື່ອການຜະລິດກະສິກຳ ພ້ອມທັງກຳນົດເຂດປູກ, ເຂດລ້ຽງ ໃຫ້ຊັດເຈນ ເພື່ອກຳນົດເປັນທິດທາງ ແລະ ມາດຕະການການປັບປຸງໃນຕໍ່ໜ້າ.

8. ມາດຕະການທີ 8: ການຕິດຕາມ-ກວດກາ ການຈັດຕັ້ງປະຕິບັດ ລະບຽບກົດໝາຍຢ່າງເຂັ້ມງວດ.

ມອບໃຫ້ອົງການກວດກາລັດຖະບານ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາໜ້າວຽກດັ່ງນີ້:

1) ສືບຕໍ່ຕິດຕາມກວດກາ, ຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ເປັນຕົ້ນການລັກລອບຂຸດຄົ້ນ ແລະ ເຄື່ອນຍ້າຍຊັບພະຍາກອນທີ່ບໍ່ຖືກຕ້ອງ;

2) ກວດກາການປະຕິບັດລາຍຮັບຢູ່ທ້ອງຖິ່ນໃຫ້ລະອຽດ ໃນ 6 ເດືອນຕົ້ນປີ ພິເສດແຂວງທີ່ຄາດວ່າຈະບໍ່ສາມາດປະຕິບັດລາຍຮັບຕາມແຜນການ ຕ້ອງໄດ້ມີມາດຕະການແກ້ໄຂແຕ່ຫົວທີ ແລະ ຂຸດຄົ້ນທ່າແຮງບົ່ມຊ້ອນ ເພື່ອເຮັດໃຫ້ການເກັບລາຍຮັບບັນລຸຕາມຄາດໝາຍ ໃນທ້າຍປີ 2018;

3) ເລັ່ງທວງ ຍອດເຫຼືອຄ້າງຈ່າຍລ່ວງໜ້ານອກແຜນງົບປະມານສະສົມໃນສົກປີຜ່ານມາ ຂອງບໍລິສັດ ແລະ ຜູ້ປະກອບການ ເພື່ອສະສາງບັນຊີໃນລະບົບຄັງເງິນແຫ່ງຊາດ ຕາມຄວາມສາມາດຕົວຈິງ;

4) ປັບປຸງແກ້ໄຂຜົນການກວດສອບຢ່າງຕັ້ງໜ້າ ພ້ອມທັງປະຕິບັດມາດຕະການຕໍ່ຫົວໜ່ວຍງົບປະມານ ແລະ ບຸກຄົນ ທີ່ລະເມີດວິໄນແຜນການ-ການເງິນ (ບ່ອນໃດມີບັນຫາ ກໍ່ໃຫ້ປັບປຸງແກ້ໄຂໃຫ້ເດັດຂາດ ໂດຍສະເພາະແມ່ນຂະແໜງການເສດຖະກິດ ທີ່ມີລາຍຮັບ);

5) ຫັນການເງິນນອກລະບົບໃຫ້ເຂົ້າສູ່ການຄຸ້ມຄອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

6) ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນຂອງບັນດາໜ່ວຍງານ ແລະ ຫົວໜ່ວຍວິສາຫະກິດລັດ ທີ່ເຄື່ອນໄຫວບໍ່ມີປະສິດທິພາບ-ປະສິດທິຜົນ, ບໍ່ມີຄວາມສາມາດໃນການປະຕິບັດພາລະບົດບາດ ແລະ

ໜ້າທີ່ຂອງຕົນ. ພ້ອມນັ້ນ, ກໍໃຫ້ປະຕິບັດມາດຕະການ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

II. ມາດຕະການຈັດຕັ້ງປະຕິບັດ:

1. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຜັນຂະຫຍາຍຄໍາສັ່ງສະບັບນີ້ ໃຫ້ເປັນແຜນວຽກລະອຽດ ແລະ ມອບຄວາມຮັບຜິດຊອບໃຫ້ໜ່ວຍງານ ແລະ ບຸກຄົນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ ພ້ອມທັງລາຍງານຄວາມຄືບໜ້າ ໃຫ້ກະຊວງແຜນການ ແລະ ການລົງທຶນຊາບ ທຸກໆ 3 ເດືອນ.
2. ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການ ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້, ພ້ອມທັງສະຫຼຸບລາຍງານໃຫ້ລັດຖະບານຊາບ ຢ່າງໜ້ອຍ 2 ອາທິດ ກ່ອນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນປະຈໍາປີ 2018 ແລະ 2019.

III. ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

IV. ຄໍາສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ທອງລຸນ ສີສຸລິດ